# ແກມຊິວ (GAMCIL)

## ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ

### ໂຄງການ ແກມຊິວ ສຳເລັດການຈັດຊຸດຝຶກອົບຮົບຄູຝຶກ ການຮຽນຮູ້ດ້ວຍຕົນເອງ ກ່ຽວກັບການພັດທະນາສື່ສີຂຽວ ແລະ ການຄຸ້ມຄອງສື່ຂອງຕົນເອງ

ໃນຕົ້ນເດືອນ ເມສາ 2025 ທີ່ຜ່ານມາ, ໂຄງການ ແກມຊິວ ໄດ້ສຳເລັດ ການຈັດຝຶກອົບຮົມຄູຝຶກ ຫຼັກສູດການຮຽນຮູ້ດ້ວຍຕົນເອງ ກ່ຽວກັບການພັດທະນາສື່ສີຂຽວ ແລະ ການຄຸ້ມຄອງສື່ຂອງຕົນເອງ ໃຫ້ແກ່ທີມງານໂຄງການ ແລະ ຕາງໜ້າຈາກຄະນະກອງເລຂາ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ໂດຍມີຜູ້ເຂົ້າຮ່ວມທັງໝົດ 10 ທ່ານ ເຊິ່ງຈັດຂຶ້ນຢູ່ທີ່ ອົງການແຄຣ໌ ນານາຊາດປະຈຳ ສປປ ລາວ, ນະຄອນຫຼວງວຽງຈັນ.









ຝຶກອົບຮົບຄູຝຶກ ການຮຽນຮູ້ດ້ວຍຕົນເອງ ກ່ຽວກັບການພັດທະນາສື່ສີຂຽວ ແລະ ການຄຸ້ມຄອງສື່ຂອງຕົນເອງ

ຈຸດປະສົງ ເພື່ອຊ່ວຍເພີ່ມທັກສະການເປັນຄູຝຶກທີ່ດີ, ເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມຮຽນຮູ້ວິທີການນຳໃຊ້ເຄື່ອງມືດິຈິຕອນເພື່ອສົ່ງເສີມ ແລະ ລາຍງານບັນຫາສີຂຽວຜ່ານຊ່ອງທາງສື່ຂອງພວກເຂົາ, ເພື່ອໃຫ້ມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ຊ່ວຍໃຫ້ສາມາດຄຸ້ມຄອງ, ບໍລິຫານຫຼັກສູດໃນລະບົບອອນລາຍດ້ວຍຕົນເອງໄດ້, ມີຄວາມຊຳນານໃນການປັບປຸງ ແລະ ສ້າງບົດຮຽນໃໝ່ໆ ຜ່ານລະບົບອອນລາຍ ໂດຍການນຳໃຊ້ຫຼັກສູດການຮຽນຮູ້ດ້ວຍຕົນເອງ. ພາຍຫຼັງສຳເລັດການຝຶກອົບຮົມຄູຝຶກແລ້ວ ຜູ້ເຂົ້າຮ່ວມກໍໄດ້ລົງມືພາກປະຕິບັດຕົວຈິງ ການສ້າງ ແລະ ເຂົ້າເຖິງເນື້ອໃນບົດຮຽນທາງອອນລາຍ, ການຜະລິດຂ່າວໂດຍການນຳໃຊ້ເຄື່ອງມືດິຈິຕອນ, ການນຳສະເໜີຂ່າວກ່ຽວກັບການພັດທະນາສີຂຽວຜ່ານສື່ຊ່ອງທາງຂອງຕົນເອງ.



## ໂຄງການແກມຊີວ ຈັດຝຶກອົບຮົມ ນັກຂ່າວປະຈຳປີເພື່ອການລາຍງານຂ່າວບັນຫາສີຂຽວ ຢູ່ພາກເໜືອ

ໃນຕົ້ນເດືອນ ເມສາ 2025 ທີ່ຜ່ານມາ, ໂຄງການແກມຊີວ ໄດ້ຈັດຊຸດຝຶກອົບຮົມນັກຂ່າວປະຈຳປີ ໃນຫົວຂໍ້ "ການລາຍງານຂ່າວບັນຫາສີຂຽວ" ໃຫ້ແກ່ນັກຂ່າວລາວ ພາກເໜືອ ທີ່ແຂວງຫຼວງພະບາງ ໂດຍມີຕົວແທນນັກຂ່າວຈາກແຂວງ ຫຼວງພະບາງ, ຜົ້ງສາລີ, ຫຼວງນ້ຳທາ, ບໍ່ແກ້ວ, ຊຽງຂວາງ, ຫົວພັນ ແລະ ໄຊຍະບູລີ ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມໃນຄັ້ງນີ້ ໂດຍມີຜູ້ເຂົ້າຮ່ວມທັງໝົດ 22 ທ່ານ.

ຈຸດປະສົງຂອງການຝຶກອົບຮົມແມ່ນ ເພື່ອເພີ່ມຄວາມອາດສາມາດໃຫ້ແກ່ນັກຂ່າວລາວ ໃນການລາຍງານຂ່າວກ່ຽວກັບບັນຫາສິ່ງແວດລ້ອມ ແລະ ການປ່ຽນແປງຂອງດິນຟ້າອາກາດ, ເພີ່ມຄວາມຮັບຮູ້ກ່ຽວສິ່ງແວດລ້ອມ, ການຊອກຫາແຫຼ່ງຂໍ້ມູນສິ່ງແວດລ້ອມທີ່ໜ້າເຊື່ອຖື ເພື່ອຊ່ວຍໃຫ້ສາມາດຂຽນຂ່າວໄດ້ຢ່າງເປັນມືອາຊີບ, ການນຳໃຊ້ເຄື່ອງປັນຍາປະດິດ (AI) ໃນການຜະລິດຂ່າວ, ການສ້າງຮູບພາບ ແລະ ໂປສເຕີ້ຂ່າວໃນເຄື່ອງມື Canva, ເຕັກນິກການຖ່າຍຮູບພາບ ແລະ ການຕັດຕໍ່ວິດີໂອ. ພາຍຫຼັງທີ່ສຳເລັດການຝຶກອົບຮົມແລ້ວ ໂຄງການ ກໍ່ໄດ້ໃຫ້ນັກຂ່າວ ຜະລິດຂ່າວທີ່ກ່ຽວກັບສິ່ງແວດລ້ອມຈຳນວນ 22 ບົດຂ່າວ ໂດຍການນຳໃຊ້ບົດຮຽນທີ່ໄດ້ຮຽນມາ ເພື່ອເອົາມານຳສະເໜີໃຫ້ກັບຊ່ຽວຊານ ແລະ ທີມງານໂຄງການໄດ້ໃຫ້ຄຳເຫັນ ແລະ ປັບປຸງໃຫ້ມີຄວາມສົມບູນແບບຫຼາຍຂື້ນ.





ການລາຍງານຂ່າວບັນຫາສີຂຽວ ໃຫ້ແກ່ນັກຂ່າວລາວ ພາກເໜືອ





## ໂຄງການ ແກມຊີວ ໄດ້ຕ້ອນຮັບການຢ້ຽມຢາມ ຄະນະຜູ້ແທນ ຈາກ ສະຫະພາບ ເອີຣົບ ແລະ ອົງການແຄຣ໌ ເຢຍລະມັນ ທີ່ ແຂວງຫຼວງພະບາງ

ໃນລະຫວ່າງວັນທີ 7-9 ເມສາ 2025, ໂຄງການແກມຊີວ ໄດ້ຕ້ອນຮັບການຢ້ຽມຢາມ ຄະນະຜູ້ແທນຈາກ ສະຫະພາບ ເອີຣົບ, ທ່ານ ນາງ ຄາລ້າ ດາ ຊິວເອີ້ ໄລຊເກີ ພ້ອມດ້ວຍທີມ ງານ ທີ່ ແຂວງຫຼວງພະບາງ. ການຢ້ຽມຢາມຄັ້ງນີ້, ທາງຄະນະ ໄດ້ມີການພົບປະກັບ ຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະ ທຳ ແລະ ທ່ອງທ່ຽວແຂວງ, ຄະນະຜູ້ປະສານງານຂັ້ນແຂວງ ໂຄງການ ແກມຊີວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນທ້ອງຖິ່ນ , ໄດ້ລົງຢ້ຽມຢາມ ແລະ ຕິດຕາມການຝຶກອົບຮົມໃຫ້ແກ່ຕາງ ໜ້ານັກຂ່າວ 8 ແຂວງພາກເໜືອ ທີ່ກຳລັງດຳເນີນຢູ່, ເຊິ່ງທາງ ຄະນະໄດ້ມີໂອກາດພົບປະໂອ້ລົມແລກປ່ຽນຄຳຄິດເຫັນ ກັບຜູ້ ເຂົ້າຮ່ວມຝຶກອົບຮົມ. ນອກຈາກນັ້ນ, ຄະນະຜູ້ແທນ ກໍໄດ້ລົງ ຢ້ຽມຢາມຫ້ອງກະຈາຍຂ່າວ ຂອງສະຖານີວິທະຍຸ-ໂທລະພາບ ແຂວງ ເພື່ອຕິດຕາມເພີ່ມເຕີມ ກ່ຽວກັບໝາກຜົນຂອງຄວາມ ສຳເລັດ ແລະ ສິ່ງທ້າທາຍ ສຳລັບການຈັດຕັ້ງປະຕິບັດກິດຈະກຳ ຂອງໂຄງການໃນໄລຍະຜ່ານ. ການຢ້ຽມຢາມຄັ້ງນີ້ສະທ້ອນໃຫ້ ເຫັນເຖິງການເປັນຄູ່ຮ່ວມມືທີ່ເຂັ້ມແຂງ ແລະ ສືບຕໍ່ໃຫ້ການ ສະໜັບສະໜູນ ເພື່ອປັບປຸງ ແລະ ເຂົ້າເຖິງຂໍ້ມູນຂ່າວສານ ຂອງ ປະຊາຊົນ ໂດຍສະເພາະກໍແມ່ນການເຜີຍແຜ່ວຽກງານພັດທະນາ ສີຂຽວ, ການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມຍືນຍົງ ຢູ່ ໃນ ສປປ ລາວ.









ຕ້ອນຮັບການຢ້ຽມຢາມ ຄະນະຜູ້ແທນ ຈາກ ສະຫະພາບ ເອີຣົບ ແລະ ອົງການແຄຣ໌ ເຢຍລະມັນ ທີ່ ແຂວງຫຼວງພະບາງ



## ໂຄງການ GAMCIL ຈັດຝຶກອົບຮົມ ນັກຂ່າວປະຈຳປີເພື່ອ ການລາຍງານຂ່າວບັນຫາສີຂຽວ ຢູ່ພາກໃຕ້

ບໍ່ດົນມານີ້, ໂຄງການສ້າງແກນຊິວ ໄດ້ສຳເລັດການຈັດຊຸດ ອົບຮົມ ການລາຍງານຂ່າວບັນຫາສີຂຽວ ໃຫ້ແກ່ນັກຂ່າວລາວ ທີ່ແຂວງຈຳປາສັກ ໂດຍໄດ້ມີຕົວແທນ ນັກຂ່າວ ຈາກແຂວງຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ, ສາລະວັນ, ອັດຕະປື ແລະ ເຊກອງ ທີ່ໄດ້ເຂົ້າຮ່ວມຝຶກອົບຮົມແບບເຊິ່ງໜ້າ ໂດຍມີຜູ້ເຂົ້າຮ່ວມທັງໝົດ 21 ທ່ານ ແລະ ແບບອອນລາຍ 20 ທ່ານ ຈາກຕົວແທນນັກຂ່າວ ຢູ່ພາກກາງ ແຂວງບໍລິຄຳໄຊ, ໄຊສົມບູນ, ວຽງຈັນ ແລະ ນະຄອນຫຼວງວຽງຈັນ.

ຈຸດປະສົງຂອງການຝຶກອົບຮົມແມ່ນ ເພື່ອເພີ່ມຄວາມອາດສາມາດໃຫ້ແກ່ນັກຂ່າວລາວ ໃນການລາຍງານຂ່າວກ່ຽວກັບບັນຫາສິ່ງແວດລ້ອມ ແລະ ການປ່ຽນແປງຂອງດິນຟ້າອາກາດ, ເພີ່ມຄວາມຮັບຮູ້ກ່ຽວສິ່ງແວດລ້ອມ ເພື່ອຊ່ວຍໃຫ້ສາມາດຂຽວຂ່າວການພັດທະນາສີຂຽວໄດ້ຢ່າງລະອຽດ, ການໃຫ້ຄວາມຮູ້ຈັນຍາບັນນັກຂ່າວ, ໃຫ້ຄວາມຮູ້ກ່ຽວກັບບົດບາດທາງເພດ ແລະ ສິດທິ ໃນຍຸກດິຈິຕອນ, ການນຳໃຊ້ເຄື່ອງມືດິຈິຕອນໃນການຜະລິດຂ່າວ ແລະ ການເຜີຍແຜ່ຂ່າວອອກສູ່ສັງຄົມອອນລາຍໃຫ້ມີຄວາມປອດໄພ. ນອກຈາກນັ້ນ ພາຍຫຼັງສຳເລັດການຝຶກອົບຮົມແລ້ວ ໂຄງການ ກໍໄດ້ພານັກຂ່າວເຂົ້າຮ່ວມການເສວະນາ ກາເຟລາວ ທີ່ປາກຊ່ອງ, ເຊິ່ງຈັດໂດຍ ໂຄງການ SuPER WE Coffee ທີ່ໄດ້ມາໃຫ້ຄວາມຮູ້ກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນ ໃນການປູກກາເຟໂດຍຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຍັງໄດ້ພານັກຂ່າວລົງເກັບກຳຂໍ້ມູນທີ ສວນອາໂກ (Agro Farm) ທີ່ເຮັດກ່ຽວກັບການປູກຜັກປອດສານພິດທີ່ເປັນມິດຕໍ່ກັບສິ່ງແວດລ້ອມ.







ໂຄງການ GAMCIL ຈັດຝຶກອົບຮົມ ການລາຍງານຂ່າວບັນຫາສີຂຽວ ໃຫ້ແກ່ນັກຂ່າວລາວ ຢູ່ພາກໃຕ້




## ໂຄງການ ແກມຊິວ ປະຊຸມຮ່ວມກັບ ຜູ້ຕາງໜ້າ ປະສານງານວຽກຮ່ວມໂຄງການ ຈາກຄະນະ ກຳມະການ ປະສານງານອົງການຈັດຕັ້ງສັງຄົມລາວ.

ໃນວັນທີ 14 ພຶດສະພາ 2025, ໂຄງການແກມຊິວ ໄດ້ປະຊຸມ ຮ່ວມກັບຜູ້ປະສານງານໂຄງການ ຈາກ ຄະນະກຳມະການ ປະສານງານອົງການຈັດຕັ້ງສັງຄົມ ລາວ (LCCO) ທີ່ ອົງການແຄຣ໌ ລາວ.

ຈຸດປະສົງໃນການປະຊຸມໃນຄັ້ງນີ້ ກໍແມ່ນເພື່ອ ເປັນ ການວາງແຜນ ການຈັດຕັ້ງປະຕິບັດກິດຈະກຳຂອງ ໂຄງການ ຮ່ວມກັບຜູ້ປະສານງານໂຄງການ ຈາກ LCCO ໃນການປະສານຫາບັນດາສະມາຊິກຂອງ ອົງການຈັດຕັ້ງສັງຄົມລາວ ເພື່ອຄັດເລືອກສະມາຄົມ ເຂົ້າຮ່ວມຝຶກອົບຮົມ ການພັດທະນາສີຂຽວ, ການຮຽນຮູ້ ສື່ດິຈິຕອນ, ສື່ແບບໃໝ່ ແລະ ການຄຸ້ມຄອງສື່ຂອງ ຕົນເອງ ລວມທັງກິດຈະກຳຕໍ່ເນື່ອງອື່ນໆ ພາຍໃຕ້ ໂຄງການແກມຊິວ ທີ່ຈະເລີ່ມຈັດຕັ້ງປະຕິບັດໃນເດືອນ ມິຖຸນາ 2025 ຫາ ກຸມພາ 2026.





ປະຊຸມຮ່ວມກັບ ຜູ້ຕາງໜ້າ ປະສານງານວຽກຮ່ວມກັບໂຄງການ ຈາກຄະນະກຳມະການ ປະສານງານອົງການຈັດຕັ້ງສັງຄົມລາວ.

“ການຝຶກອົບຮົມ ການລາຍງານຂ່າວສີຂຽວ ເປັນປະສົບການອັນໃໝ່ສຳລັບຂ້ອຍຫຼາຍ. ຂ້ອຍໄດ້ຮຽນຮູ້ ແລະ ເຂົ້າໃຈກັບບັນຫາສິ່ງແວດລ້ອມຫຼາຍຂຶ້ນ, ໄດ້ນຳໃຊ້ທັກສະການຂຽນຂ່າວແບບໃໝ່ ເຂົ້າໃນວຽກງານທີ່ຕົນເອງຮັບຜິດຊອບ ແລະ ຍັງໄດ້ນຳສະເໜີຂ່າວບັນຫາສີຂຽວ ແລະ ຊ່ວຍເຜີຍແຜ່ວຽກງານສີຂຽວ ເພື່ອເປັນການປູກຈິດສຳນຶກໃຫ້ແກ່ຜູ້ອ່ານ ແລະ ຜູ້ຟັງ ໃຫ້ຮ່ວມໃຈກັນມາປົກປັກຮັກສາສິ່ງແວດລ້ອມຫຼາຍຂຶ້ນ”



**ທ່ານ ນາງ ຂັນລາວອນ ວໍລະສິງ,**
ໂຄສົກ, ນັກຂ່າວ ວິທະຍຸ- ໂທລະພາບແຂວງຊຽງຂວາງ




**ທ່ານ ນາງ ມະນີທອງ ແພງມາຈັນ**
ໂຄສົກ ວິທະຍຸ-ໂທລະພາບ ແຂວງຫົວພັນ

ຂ້ອຍຮູ້ສຶກດີໃຈຫຼາຍ ທີ່ໄດ້ຮຽນຮູ້ສິ່ງໃໝ່ໆຈາກການເຂົ້າຮ່ວມຝຶກອົບຮົມນຳໂຄງການ ເປັນຕົ້ນແມ່ນ ການນຳໃຊ້ເຕັກໂນໂລຊີດີຈີຕອລ ແລະ ສື່ແບບໃໝ່ ເຊິ່ງເປັນຊ່ອງທາງທີ່ໄວ ໄປເຖິງກຸ່ມເປົ້າໝາຍຫຼາຍຂຶ້ນ. ຂ້ອຍກໍຍັງໄດ້ນຳໃຊ້ສິ່ງທີ່ຮຽນມາຊ່ວຍໃນວຽກທີ່ຂ້ອຍກຳລັງເຮັດຢູ່ ແລະ ໄດ້ລາຍງານຂ່າວບັນຫາສີຂຽວຫຼາຍຂຶ້ນ ເພາະມັນເປັນສິ່ງສຳຄັນຫຼາຍ ທີ່ຊ່ວຍສ້າງຄວາມຮັບຮູ້ດ້ານສິ່ງແວດລ້ອມ ໃຫ້ປະຊາຊົນຜ່ານສື່ມວນຊົນໂດຍໃຫ້ເຂົາເຈົ້າໄດ້ຮູ້ເຖິງສາເຫດ - ຜົນກະທົບຕ່າງໆຂອງການທຳລາຍສິ່ງແວດລ້ອມ, ຮູ້ຮັກທຳມະຊາດ ແລະ ຮ່ວມກັນອະນຸລັກປ່າໄມ້ໃຫ້ອຸດົມສົມບູນ.

**ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ**

ພວກເຮົາປາຖະໜາເຫັນໂລກນີ້ເຕັມໄປດ້ວຍຄວາມຫວັງ, ການໃຫ້ອະໄພ, ສັງຄົມມີຄວາມຍຸຕິທຳ, ຫຼຸດພົ້ນຈາກຄວາມທຸກຍາກ ແລະ ປະຊາຊົນດຳລົງຊີວິດຢູ່ຢ່າງປອດໄພ ແລະ ມີກຽດສັກສີ.

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

Lao Journalists Association

# ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ



ການວາງແຜນຮ່ວມກັນໃນການປັບຕົວຕໍ່ກັບການປ່ຽນແປງສະພາບດິນຟ້າອາກາດ.

## ແຜນທີ



ທີ່ຕັ້ງໂຄງການ
ນະຄອນຫຼວງວຽງຈັນ

ພື້ນທີ່ເປົ້າໝາຍ
ຫຼວງພະບາງ, ຈຳປາສັກ

ໄລຍະເວລາ
ມີນາ 2023 - ກຸມພາ 2027

ຜູ້ໄດ້ຮັບຜົນປະໂຫຍດ
ທາງກົງ ຜູ້ຊາຍ ແລະ ແມ່ຍິງ 6,155 ຄົນ
ທາງອ້ອມ ຜູ້ຊາຍ ແລະ ແມ່ຍິງ 10,000 ຄົນ

ຄູ່ຮ່ວມງານ
ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກົມສື່ມວນຊົນ ແລະ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ

## ຄວາມເປັນມາຂອງ ໂຄງການ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ ແມ່ນໂຄງການໜຶ່ງທີ່ໄດ້ເຮັດວຽກກັບບັນດາສື່ມວນຊົນຂອງລັດ ແລະ ເອກະຊົນ ເພື່ອປັບປຸງທັກສະວິຊາຊີບຂອງນັກຂ່າວລາວ ໂດຍການເພີ່ມຄວາມຮູ້ທາງດ້ານສື່ດິຈິຕອລ ແລະ ຄວາມເຂົ້າໃຈກ່ຽວກັບສື່ແບບໃໝ່. ໂຄງການ ໄດ້ຮັບການສະໜັບສະໜູນຈາກ ໂຄງການ ພັດທະນາສີຂຽວຂອງສະຫະພາບ ເອີຣົບ ທີ່ໃຫ້ການສະໜັບສະໜູນນະໂຍບາຍໃນຂົງເຂດດ້ານການປັບຕົວ ແລະ ການຫຼຸດຜ່ອນຄວາມສ່ຽງຕໍ່ກັບດິນຟ້າອາກາດ, ການພັດທະນາເສດຖະກິດ-ສັງຄົມ ແບບຍືນຍົງ.

ໂຄງການ ຍັງໄດ້ເສີມຂະຫຍາຍການຮັບຮູ້ທາງດ້ານ ສື່ດິຈິຕອລ ແລະ ການພັດທະນາສີຂຽວ ເພື່ອເພີ່ມການເຂົ້າເຖິງຂໍ້ມູນຂ່າວສານ ການພັດທະນາທີ່ກ່ຽວຂ້ອງກັບບົດບາດທາງເພດ, ສິດທິຂອງຜູ້ອອກແຮງງານ ແລະ ການພັດທະນາຊຸມຊົນໃນ ສປປ ລາວ ທີ່ຕິດພັນກັບການພັດທະນາສີຂຽວແບບຍືນຍົງ. ໂຄງການຍັງຈະເສີມສ້າງການມີສ່ວນຮ່ວມ, ທັດສະນະຄະຕິ, ວິໄສທັດ ແລະ ຄວາມສາມາດຂອງນັກຂ່າວ ດ້ວຍການສຸມໃສ່ການນຳໃຊ້ສື່ຢ່າງເຂັ້ມແຂງ ເພື່ອສົ່ງເສີມການເຕີບໂຕສີຂຽວຂອງປະຊາຊົນ ໃນ ສປປ ລາວ.

ຜ່ານການຝຶກອົບຮົມ, ການປະຊຸມ, ການແຂ່ງຂັນ ແລະ ການເຮັດກິດຈະກຳຕ່າງໆ, ອົງການຈັດຕັ້ງທາງສັງຄົມລາວ, ນັກຂ່າວລາວ, ນັກສ້າງຮູບເງົາ, ຢູທູບເບີ້ ຈະໄດ້ຮັບການເສີມຂະຫຍາຍຄວາມຮູ້ຄວາມສາມາດ, ໃຫ້ພວກເຂົາໄດ້ມີສ່ວນຮ່ວມຢ່າງສ້າງສັນເຂົ້າໃນການວາງນະໂຍບາຍ, ຕິດຕາມ ແລະ ຊຸກຍູ້ ໂດຍຜ່ານການລາຍງານທີ່ມີຄວາມຮັບຜິດຊອບ ແລະ ເປັນມືອາຊີບ ກ່ຽວກັບການພັດທະນາສີຂຽວ.

## ຈຸດປະສົງຂອງ ໂຄງການ

ເພື່ອແກ້ໄຂຊ່ອງວ່າງທາງດ້ານຄວາມຮູ້ທາງສື່ສັງຄົມ, ປັບປຸງການຮູ້ທາງດ້ານສື່ດິຈິຕອລ ແລະ ຫຼຸດຜ່ອນຄວາມສ່ຽງຂອງ "ຂ່າວປອມ" ໂດຍການເສີມສ້າງຂີດຄວາມສາມາດຂອງນັກຂ່າວລາວຢູ່ ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ ແລະ ແຂວງ ຈຳປາສັກ.

ເພື່ອເພີ່ມທະວີຄວາມຮັບຮູ້ກ່ຽວກັບບັນຫາສີຂຽວ ແລະ ການປ່ຽນແປງດິນຟ້າອາກາດໃນພື້ນທີ່ຊົນນະບົດຂອງ ສປປ ລາວ

## ຜູ້ໃຫ້ທຶນ

ສະຫະພາບ ເອີຣົບ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ
2023